ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ພິທີມອບ-ຮັບ ໃບຍ້ັງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021ໃຫ້ແກ່ 3 ກົມຂອງ ທຫລ




ໃນຕອນເຊົ້າຂອງວັນທີ 1 ກໍລະກົດ 2022 ທີ່ ຫ້ອງປະຊຸມໃຫຍ່ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງພິທີມອບ-ຮັບ ໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021 ໃຫ້ແກ່ 3 ກົມຂອງ ທຫລ ຄື: ໜ່ວຍພັກກົມຈັດຕັ້ງແລະ ພະນັກງານ, ໜ່ວຍພັກຫ້ອງການ ແລະ ໜ່ວຍພັກກົມພິມຈຳໜ່າຍ, ໂດຍການໃຫ້ກຽດເປັນປະທານຂອງສະຫາຍ ຄຳວົງ ທິບພະວົງ ຮອງ ເລຂາຄະນະພັກ ທຫລ, ຮອງຜູ້ວ່າການ ທຫລ ພ້ອມດ້ວຍການເຂົ້າຮ່ວມຂອງຄະນະໜ່ວຍພັກ ແລະ ສະມາຊິກພັກຂອງທັງ 3 ໜ່ວຍພັກ ຢ່າງພ້ອມພຽງ.

ໃນພິທີ ສະຫາຍ ເພັດສະຖາພອນ ແກ້ວວົງວິຈິດ ເລຂາໜ່ວຍພັກຫ້ອງການ ໄດ້ຕາງໜ້າໃຫ້ 3 ໜ່ວຍພັກ ຂຶ້ນຜ່ານບົດສະຫຼຸບຕີລາຄາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໂດຍສັງເຂບ, ເຊິ່ງໃນໄລຍະປີ 2021 ຜ່ານມາຄະນະໜ່ວຍພັກ ແລະ ສະມາຊິກພັກ ຂອງທັງ 3 ໜ່ວຍພັກໄດ້ຍົກສູງຄວາມຮັບຜິດຊອບ ກໍ່ຄືສະຕິໃນການຝຶກຝົນຫຼໍ່ຫຼອມຕົນເອງໃນແຕ່ລະດ້ານ ເຮັດໃຫ້ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຄວາມເຊື່ອໝັ້ນ ແລະ ເປັນເອກະພາບຕໍ່ການນຳພາຂອງຄະນະນຳຂັ້ນຕ່າງໆ. ສະມາຊິກພັກມີສະຕິຕໍ່ການຈັດຕັ້ງ, ມີຄວາມສາມັກຄີ ແລະ ຈຳກັດໄດ້ປະກົດການຫຍໍ້ທໍ້ໃນຮູບແບບຕ່າງໆ, ໂດຍໄດ້ຖືເອົາການກໍ່ສ້າງປັບປຸງພັກຕາມ 5 ຫຼັກການ ແລະ 3 ທິດນຳ ໂດຍປິ່ນອ້ອມ 5 ເນື້ອໃນຂອງການປັບປຸງກໍ່ສ້າງພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ຖືເປັນອັນສຳຄັນໃນການປັບປຸງແກ້ໄຂດ້ານອ່ອນ-ຂໍ້ຄົງຄ້າງໃນປີຜ່ານມາ, ຕິດພັນກັບການຍົກສູງຄວາມເປັນແບບຢ່າງນຳໜ້າໃນການປະຕິບັດກົດລະບຽບພັກ ແລະ ບັນດານິຕິກຳຕ່າງໆຂອງຂັ້ນເທິງ. ບັນດາຜົນງານທີ່ພົ້ນເດັ່ນທີ່ຍາດມາໄດ້ມີຄື: ① **ດ້ານການຈັດຕັ້ງ ແລະ ກໍ່ສ້າງພະນັກງານ**: ສະມາຊິກພັກໄດ້ເສຍສະຫຼະເວລາເຂົ້າຮ່ວມຂະບວນການປ້ອງກັນເວນຍາມ ແລະ ປະຕິບັດມາດຕະການປ້ອງກັນພະຍາດໂຄວິດ-19 ຢ່າງ

ເຄັ່ງຄັດ, ຈັດຕັ້ງວຽກງານສຶກສາອົບຮົມການເມືອງ-ແນວຄິດຢູ່ຂະແໜງທະນາຄານໃນການຈັດຕັ້ງເຊື່ອມຊຶມບັນດານິຕິກຳຕ່າງໆຂອງຂັ້ນເທິງ, ຕິດພັນກັບການປາຖະກະຖາວັນສຳຄັນຕ່າງໆຂອງຊາດ-ຂອງພັກ ແລະ ຂອງສາກົນ. ② **ດ້ານການເປັນເສນາທິການໃຫ້ແກ່ຄະນະຜູ້ວ່າການ:** ສຳເລັດການກະກຽມເນື້ອໃນເອກະສານຂອງກອງປະຊຸມທະນາຄານທົ່ວປະເທດ ປະຈຳປີ 2021; ກອງປະຊຸມສະພາບໍລິຫານ ທຫລ ຈຳນວນ 3 ຄັ້ງ (ຄື: ຄັ້ງທີ II ປະຈຳປີ 2020; ຄັ້ງທີ I ປະຈຳປີ 2021 ແລະ ຄັ້ງທີ II ປະຈຳປີ 2021; ເປັນເຈົ້າການເຜີຍແຜ່ການເຄື່ອນໄຫວວຽກງານຕ່າງໆຂອງ ທຫລ ໂດຍສະເພາະການຄຸ້ມຄອງມະຫາພາກທາງດ້ານເງິນຕາຜ່ານສື່ສິ່ງພິມຕ່າງໆ ເພື່ອໃຫ້ສັງຄົມໄດ້ຮັບຮູ້-ເຂົ້າໃຈ. ③ **ດ້ານວຽກງານພິມຈຳໜ່າຍ**: ປົກປັກຮັກສາຄັງສາງທະນະບັດ ແລະ ວັດຖຸມີຄ່າຂອງລັດ ບໍ່ໃຫ້ຕົກເຮ່ຍເສຍຫາຍໄດ້ 100%, ຄຸ້ມຄອງບໍລິຫານທະນະບັດໃນຂອດຈໍລະຈອນໃຫ້ສົມດຸນ ແລະ ພຽງພໍກັບຄວາມຕ້ອງການຂອງສັງຄົມຢ່າງມີຫຼັກການ, ຖອນຄືນທະນະບັດທີ່ບໍ່ຄົບມາດຖານເງື່ອນໄຂ (ທະນະບັດເສື່ອມຄຸນນະພາບ) ເພື່ອທຳລາຍໃຫ້ຖືກຕ້ອງສອດຄ່ອງຕາມລະບຽບການທີ່ໄດ້ກຳນົດໄວ້ ແລະ ອື່ນໆອີກຫຼາຍຜົນງານ.





ໃນໂອກາດນີ້, ສະຫາຍ ຄຳວົງ ທິບພະວົງ ຮອງເລຂາຄະນະພັກ ທຫລ, ຮອງຜູ້ວ່າການ ທຫລ ໄດ້ຕີລາຄາສູງຕໍ່ກັບຜົນງານຂອງແຕ່ລະໜ່ວຍພັກທີ່ຍາດມາໄດ້, ພ້ອມທັງຮຽກຮ້ອງມາຍັງຄະນະໜ່ວຍພັກຂອງທັງ 3 ໜ່ວຍພັກ ຈົ່ງໄດ້ຍົກສູງການນຳພາທາງດ້ານການເມືອງແນວຄິດຂອງສະມາຊິກພັກພາຍໃນໜ່ວຍພັກຂອງຕົນໃຫ້ມີສະຕິຕໍ່ການຈັດຕັ້ງ, ເຄົາລົບຕໍ່ລະບຽບກົດໝາຍ ເພື່ອຕ້ານການເກີດປະກົດການຫຍໍ້ທໍ້ຕ່າງໆທີ່ອາດຈະເກີດຂຶ້ນໃນອານາຄົດ, ພ້ອມນີ້ກໍ່ໃຫ້ສະມາຊິກພັກທຸກສະຫາຍຈົ່ງເອົາໃຈໃສ່ໃນການຝຶກຝົນຫຼໍ່ຫຼອມຕົນເອງໃນແຕ່ລະດ້ານ ເພື່ອໃຫ້ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ ແລະ ລັດ, ຍົກສູງສະຕິຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານຂອງຕົນ ເພື່ອຕໍ່ສູ້ຜ່ານຜ່າອຸປະສັກຕ່າງໆໃຫ້ໄດ້ສຳເລັດຕາມໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ.

**# ຂ່າວ-ພາບ: ວັນປະເສີດ ສົມບູນຂັນ.**